ກຸຫຼາບຂາວຊາບຊື້ງ ລຳພຶງສິ່ງເປັນສຽງເພງ
ບັນເລງເປັນທຳນອງຫວານ ຫວ່ານໃຈໄກກວ້າງ
ນາງຄືດວງມາລາໄມ້ ຂາວໃສແສນສະອາດ
ພາດສາຍຕາໃສ່ນ້ອງ ປະຄອງໄວ້ຢູ່ໃຈ ອ້າຍແລ້ວ

ກຸຫຼາບຂາວເປັນດອກໄມ້ ໃສຄືແຫວ່ນແດນຫຼັກເຈັດ
ຈະເດັດດົມດວງໃດ ກໍດັ່ງດຽວສເມີດ້ານ
ງາມກິ່ງໃບທັງກ້ານ ບານສົດໃສທຳມະຊາດ
ບໍ່ອາດເດັດດອກນີ້ ເພາະຍັງມີດອກນັ້ນ ພັນຕົ້ນກໍດັ່ງດຽວ

ຫຼຽວຫຼ່ຳມອງດອກຟ້າ ຜູ້ສູງຄ່າເລີຍຄວາເດັດ
ສາວຫຼັກເຈັດກໍມີຫຼາຍ ຜູ້ອ້າຍຫມາຍນັ້ນຄືນ້ອງ
ສົມໃຈປອງອ້າຍລຳຖ້າ ຈຶ່ງເດັດມາໄດ້ພຽງດອກ
ບໍ່ຫວັງລວງຫຼອກນ້ອງ ປະຄອງຂ້າງຢາກຄູ່ກາຍ ນ້ອງເອີຍ

ຍົມມາລາເປັນດອກໄມ້ ທີ່ໃສສິ່ງແສງສີ
ບໍ່ມີຣາຄີຄາວ ກຸຫຼາບຂາວແມ່ນນາມນ້ອງ
ໃສຮອງໆບໍ່ມີເສົ້າ ເງົາພຣະຈັນມາສາດສິ່ງ
ພຣະຍາທິງຢູ່ຟ້າ ມາບິນເຈັ້ຍເຈີດລີງ

ກຸຫຼາບຂາວປູກຢູ່ຊີ້ງ ທີງພັດເວີ່ນມາຫາ
ເອົາມາລາໄປຄອງ ນັ່ງປອງເປັນເຈົ້າ
ຈິດໃຈນາງບໍ່ມີເສົ້າ ເງົາດວງຕາກໍອີງອາດ
ມາຣະຍາດວາດເວົ້າ ຕະກຸນເຈົ້າເຜົ່າຜູ້ດີ

ວາດຊີງບົ່ງບອກຊີ້ ທີນຶ່ງໃນຫຼັກເຈັດ
ລວມເພັດນິນຈິນດາ ຄ່າຄຸນກໍຍັງນ້ອຍ
ສັຕຣີລາວຂໍຕາມຫ້ອຍ ນໍາຮອຍກີບກຸຫຼາບ
ຊາວຊີ້ງຄຸນຄ່າເຈົ້າ ຜູ້ທຽມເທົ້າຫນ່ວຍມະນີ ແທ້ແລ້ວ

ໂດຍ: ສາວຫຼັກ ໆ ເມັດນໍ້າຕານເມືອງສວັນ